# ໂຮງຮຽນວັນອາທິດ

**ວັນອາທິດທີ 2 ກໍຣະກະດາ 2017 (7- 2- 2017)**

## ແບ່ງປັນເຣື່ອງພຣະຄຣິດ

ເວລາໃດ-+ທີ່ທ່ານຕ້ອງການຄວາມກ້າຫານ ເພື່ອຈະແນະນຳຕົວທ່ານເອງຕໍ່ຄົນອື່ນ?

**ຈຸດສຳຄັນໃນບົດຮຽນ**: ພວກເຮົາມີໜ້າທີ່ຮັບຜິດຊອບໃນການແນະນຳເພື່ອນຂອງເຮົາໃຫ້ກັບພຣະເຢຊູ.

**ພຣະຄັມພີຕອບສນອງຕໍ່ຊີວິດ**:

ການແນະນຳຕົວອາດສາມາດກາຍເປັນເຣື່ອງສຳຄັນທີ່ສຸດໄດ້. ອີວັນ ວູນເຮນ ໄດ້ແນະນຳ ພອລ ແມກຄານນີ, ທີ່ເປັນເພື່ອນຈາກໂຮງຮຽນ ໃຫ້ກັບເພື່ອນອີກຄົນນຶ່ງຊື່ ຈອນ ເລນອນ. ຫຼັງຈາກນັ້ນເຂົາທັງສອງສາມາດເຕັ້ນ ແລະປ່ຽນແປງໂລກຂອງດົນຕຣີ. ບຽວ ເຟີແນນເດດ ແນະນຳເພື່ອນຂອງລາວ ສະຕີບ ໂວນີກ ໃຫ້ກັບເພື່ອນອີກຄົນນຶ່ງຊື່, ສະຕີບ ຈອບ. ໃນທີ່ສຸດລາວກໍໄດ້ຜລິດເຄື່ອງໃຊ້ຍີ່ຫໍ້ "ແອບໂປລ" ທີ່ຫລາຍຄົນໄດ້ໃຊ້ໃນເວລານີ້.

ພວກເຮົາຮູ້ວ່າ ນັ້ນແມ່ນລະດັບຄວາມສາມາດຂອງບຸກຄົນ, ຫຼາຍໆຄົນໃນພວກເຮົາໄດ້ແນະນຳຕົວຕໍ່ທີ່ຊຸມນຸມຊົນຫຼືຕໍ່ຄົນໃດຄົນນຶ່ງເລີຍກາຍເປັນໂອກາດທີ່ດີຕໍ່ຄົນນັ້ນ ໃນທີ່ສຸດກໍກາຍມາເປັນສາມີຫລືພັລຍາຂອງເຮົາ. ຄົນສລາດຄົນນຶ່ງໄດ້ໃຫ້ຄວາມຄິດເຫັນວ່າ ລາວເອງເປັນຜູ້ທີ່ເຊື່ອໝັ້ນຫຼາຍໃນສາມສິ່ງນີ້: ບຸກຄົນທີ່ລາວໄດ້ພົບ, ສະຖານທີ່ລາວໄດ້ໄປ, ແລະປຶ້ມທີ່ລາວໄດ້ອ່ານ. ຂ້າພະເຈົ້າຄິດວ່ານີ້ແມ່ນຄຳແນະນຳທີ່ເຊື່ອຖືໄດ້, ແຕ່ໃຫ້ພິຈາຣະນາເບິ່ງບົດບາດການແນະນຳຂອງເຮົາເພື່ອຊ່ວຍຄົນອື່ນໃຫ້ມາພົບພຣະຄຣິດ ເພາະການມີສາຍສຳພັນກັບພຣະເຢຊູຄຣິດໄດ້ເກີດການປ່ຽນແປງໃນຊີວິດ. ໃນພຣະທັມໂຢຮັນ, ພວກເຮົາໄດ້ເຫັນການແນະນຳຂອງບາງຄົນເພື່ອໃຫ້ຄົນອື່ນໄດ້ພົບກັບພຣະເຢຊູ ໄທນາຊາເຣັດ. ຕໍ່ຈາການນັ້ນ, ຄົນນັ້ນກໍແນະນຳຄົນອື່ນຕໍ່ໄປເພື່ອໃຫ້ພົບກັບພຣະອົງ. ແລະແຕ່ລະປາກົດການໃນການແນະນຳກໍຈະຕາມມາດ້ວຍມີການປ່ຽນແປງເກີດຂຶ້ນໃນຊີວິດ.

**ພຣະຄັມພີກ່າວວ່າຢ່າງໃດ?** ( ເບິ່ງຕາມຫົວຂໍ້ 1, 2 ແລະ 3 )

## <u>ສຶກສາພຣະຄັມພີ</u>

### 1. <u>ໂຢຮັນ 1: 35-39:</u>

*35ລ່ວງໄປອີກວັນໜຶ່ງໂຢຮັນກຳລັງຢືນຢູ່ກັບລູກສິດຂອງຕົນສອງຄົນ 36ແລະທ່ານໄດ້ເພັ່ງເບິ່ງພຣະເຢຊູກຳລັງສະເດັດ*
*ກາຍໄປ ຈຶ່ງກ່າວວ່າ, ເບິ່ງແມ ພຣະເມສານ້ອຍຂອງພຣະເຈົ້າ." 37ລູກສິດສອງຄົນໄດ້ຍິນໂຢຮັນເວົ້າດັ່ງນັ້ນ ເຂົາຈຶ່ງຕິດ*
*ຕາມພຣະເຢຊູໄປ. 38ຝ່າຍພຣະເຢຊູຊົງຫລຽວຫລັງເຫັນເຂົາທັງສອງຕິດຕາມມາ ຈຶ່ງຊົງຖາມເຂົາວ່າ, "ພວກທ່ານຊອກ*
*ຫາຫຍັງ" ເຂົາທູນພຣະອົງວ່າ, "ຮັບບີ (ຊຶ່ງແປວ່າ ອາຈານ) ທ່ານອາສັຍຢູ່ທີ່ໃດ." 39ພຣະອົງຊົງຕອບເຂົາວ່າ, "ຈົ່ງມາ*
*ເບິ່ງ" ເຂົາກໍໄປແລະເຫັນບ່ອນຊຶ່ງພຣະອົງຊົງອາສັຍ ວັນນັ້ນເຂົາກໍໄດ້ພັກຢູ່ກັບພຣະອົງ ເພາະເປັນເວລາປະມານສີ່*
*ໂມງແລງແລ້ວ.*

ໃນສມັຍຂອງພຣະເຢຊູ, ການເປັນສາວົກຂອງໃຜຜູ້ນຶ່ງມີຄວາມໝາຍວ່າຜູ້ເປັນສາວົກຈະໄປບ່ອນທີ່ຜູ້ນຳພາໄປ, ນອນບ່ອນທີ່ຜູ້ນຳພານອນ, ກິນສິ່ງທີ່ຜູ້ນຳພາກິນ, ແລະເຮັດທຸກສິ່ງທີ່ຄວນເຮັດຕາມແບບຢ່າງຂອງຜູ້ນຳ. ໂຢຮັນບັບຕິສະໂຕມີລູກສິດແບບນີ້, ລວມທັງອັນເດອາແລະຄົນອື່ນທີ່ບໍ່ອອກຊື່(ໂຢຮັນ 1: 40 ). ດັ່ງນັ້ນແນ່ນອນມັນເປັນຄວາມເຂົ້າໃຈແລະຄວາມສົນໃຈຂອງເຂົາເຈົ້າ ເມື່ອຜູ້ນຶ່ງໄດ້ໃຫ້ຄຳຊີ້ແຈງວ່າ " ຈົ່ງເບິ່ງ, ພຣະເມສານ້ອຍຂອງພຣະເຈົ້າ!"

ໂຢຮັນໄດ້ປະກາດເຖິງການສະເດັດມາຂອງພຣະເມສີອາເປັນເວລາດົນນານ, ດັ່ງນັ້ນຜູ້ທີ່ຕິດຕາມເພິ່ນຈຶ່ງຮູ້ຢ່າງຄັກແນ່ວ່າເຂົາເຈົ້າຕ້ອງຕ້ອນຮັບພຣະເຢຊູແລະຕິດຕາມພຣະອົງ. ເຂົາເຈົ້າເລືອກທີ່ຈະເປັນລູກສິດຂອງອົງພຣະຜູ້ເປັນເຈົ້າ. ພວກເຮົາຮູ້ວ່າເປັນຍ້ອນເຂົາເຈົ້າ " ຕິດຕາມພຣະເຢຊູ" ແລະຖາມພຣະອົງວ່າ, " ທ່ານອາສັຍຢູ່ທີ່ໃດ?" ເຂົາເຈົ້າຈຶ່ງພ້ອມທີ່ຈະໄປທຸກທີ່ໆພຣະອົງສະເດັດໄປ .

ເປັນເຣື່ອງປົກກະຕິສຳລັບຄຣູສອນສາສນາຢິວທີ່ອາດຈະມີຄຳຖາມຢ່າງນີ້ເກີດຂຶ້ນຖ້າເຂົາເຈົ້າເປັນຜູ້ທີ່ໜ້າຍົກຍ້ອງນັບຖື. ເຂົາເຈົ້າທັງສອງເອີ້ນພຣະເຢຊູວ່າ " ຣັບບີ!" ( ຊຶ່ງແປ່ວ່າ "ພຣະອາຈານ") ແລະຖາມວ່າພຣະອົງອາສັຍຢູ່ທີ່ໃດ. ພຣະເຢຊູບໍ່ພຽງແຕ່ຖາມ "ພວກທ່ານຊອກຫາຫັຍງ?" ແຕ່ພຣະເຢຊູໄດ້ເຊື້ອເຊີນເຂົາເຈົ້າທັງສອງແບບງ່າຍໆແລະເລິກເຊິ່ງທີ່ສຸດວ່າ: " ຈົ່ງມາແລະທ່ານຈະເຫັນ." ຊຶ່ງເປັນຄຳບັນລະຍາຍທີ່ສວຍງາມຂອງຄວາມຮັກຂອງພຣະເຢຊູສຳລັບມະນຸດ. ພຣະອົງຊົງອຳນວຍຄວາມສະດວກຢູ່ຕລອດເວລາສຳລັບຄົນທີ່ຊອກຫາພຣະອົງ. ພຣະເຢຊູຊົງກະທຳພຣະຣາຊກິດຕລອດເວລາ. ເຊັ່ນດຽວກັນ, ໃນທຸກວັນນີ້ພຣະອົງຍັງມີເວລາຢູ່ສເມີສຳລັບຄົນທີ່ຢາກມາເບິ່ງ, ມາຫາພຣະອົງ.

**2. <u>ໂຢຮັນ 1:40-45</u>:**

*40ໃນສອງຄົນທີ່ໄດ້ຍິນໂຢຮັນເວົ້າແລະຕິດຕາມພຣະເຢຊູໄປນັ້ນຜູ້ໜຶ່ງຄືອັນເດອານ້ອງຊາຍຂອງຊີໂມນເປໂຕ. 41ອັນເດອາກໍໄປຫາຊີໂມນອ້າຍຂອງຕົນກ່ອນແລະໄດ້ບອກວ່າ, "ພູ່ເຮົາໄດ້ພົບເມຊີອາແລ້ວ" (ທີ່ແປວ່າ ພຣະຄຣິດ). 42ອັນເດອາຈຶ່ງພາຊີໂມນໄປເຝົ້າພຣະເຢຊູ ເມື່ອຊົງທອດພຣະເນດແລ້ວພຣະອົງຈຶ່ງຊົງກ່າວວ່າ, "ທ່ານຄືຊີໂມນລູກຂອງໂຢຮັນ ທ່ານຈະໄດ້ຊື່ໃໝ່ວ່າ ເກຟາ" (ທີ່ແປວ່າ ເປໂຕ ຄືຫີນ). 43ລ່ວງໄປວັນໜຶ່ງ ພຣະເຢຊູຊົງຕັ້ງພຣະທັຍຈະສະເດັດໄປແຂວງຄາລີເລ ພຣະອົງຊົງພົບຟີລິບຈຶ່ງຊົງກ່າວວ່າ, "ຈົ່ງຕາມເຮົາມາ". 44ຟີລິບມາຈາກເບັດຊາອີດາ ເມືອງຂອງອັນເດອາແລະເປໂຕ. 45ຟີລິບໄດ້ໄປຫານະທານາເອັນ ບອກວ່າ, "ເຮົາໄດ້ພົບຜູ້ທີ່ໂມເຊໄດ້ກ່າວເຖິງໃນໜັງສືພຣະບັນຍັດແລະທີ່ພວກຜູ້ປະກາດພຣະທັມໄດ້ກ່າວເຖິງເໝືອນກັນ ຄືເຢຊູລູກຂອງໂຢເຊັບ ໄທນາຊາເຣັດ".*

ຄຳທີ່ວ່າ "ປະກາດຂ່າວປະເສີດ" ເຮັດໃຫ້ຜູ້ເຊື່ອທັງຫຼາຍມີຄວາມກັງວົນ. ພວກເຮົາຮູ້ວ່າການແບ່ງປັນຄຳສອນຂອງພຣະເຢຊູກັບຄົນອື່ນມີຄວາມສຳຄັນຫລາຍ. ໃນຂະນະທີ່ພວກເຮົາຢ້ານກົວ ໂດຍການເຫັນພາບການລົງມືເຮັດຢ່າງເອົາຈິງເອົາຈັງ. ແຕ່ຈົ່ງສັງເກດເບິ່ງຄວາມໝັ້ນໃຈແລະຮ້ອນຮົນໃຈຂອງອັນເດອາຢາກບອກອ້າຍຂອງລາວທີ່ຊື່ຊີໂມນ (ທີ່ພວກເຮົາຮູ້ລາວດີໃນຊື່ເປໂຕ) ກ່ຽວກັບເຣື່ອງພຣະເຢຊູ. ເໝືອນກັບຊາວຢິວ, ພວກເຮົາກໍໄດ້ພົບພຣະເມສີອາພຣະຜູ້ໂຜດໃຫ້ພົ້ນ. ດັ່ງນັ້ນຈຶ່ງເປັນການງ່າຍທີ່ຈະສລຸບເອົາເອງວ່າອັນເດອາເຕັມໄປດ້ວຍຄວາມຮູ້ສຶກທີ່ຕື່ນເຕັ້ນ ເມື່ອລາວປະກາດຂ່າວດີວ່າພຣະເຢຊູແມ່ນພຣະເມສີອາຕົວຈິງທີ່ພວກເຮົາສແວງຫາ.

ການຊີ້ນຳອັນຈູງໃຈຂອງອັນເດອາໄດ້ນຳຊີໂມນໃຫ້ໄດ້ພົບກັບພຣະເຢຊູ, ຊຶ່ງມີການປ່ຽນແປງເກີດຂຶ້ນ. ໂດຍທີ່ອົງພຣະເຢຊູໄດ້ປ່ຽນຊື່ຂອງຊີໂມນຊຶ່ງສະທ້ອນໃຫ້ເຫັນເຖິງເຫດການທີ່ຈະເກີດໃນເວລາສຸດທ້າຍ: "ທ່ານຄືຊີໂມນລູກຂອງໂຢຮັນ ທ່ານຈະໄດ້ຊື່ໃໝ່ວ່າ ເກຟາ" (ທີ່ແປວ່າ ເປໂຕ ຄືຫີນ)" ສິ່ງທີ່ສຳຄັນພຣະເຢຊູໃຫ້ອີກຊື່ນຶ່ງແກ່ຊີໂມນທີ່ມີຄວາມໝາຍວ່າ " ຫີນ." ເປໂຕອາດຈະເປັນຄົນໃຈຮ້ອນແລະເຮັດແລ້ວຈຶ່ງຄິດ, ແຕ່ມີຄວາມສາມາດໃນການເປັນຜູ້ນຳແລະຢູ່ພາຍໃຕ້ການນຳພາຂອງພຣະເຈົ້າ, ລາວອາດຈະກາຍມາເປັນຜູ້ນຳທີ່ແຂງແກ່ນຄືກັບຫີນ.

ວັນຕໍ່ມາພຣະເຢຊູໄດ້ສະເດັດໄປຍັງແຂວງຄາລີເລບ່ອນທີ່ພຣະອົງພົບຟີລິບ. ຈົ່ງສັງເກດເບິ່ງບໍ່ແມ່ນ " ທຸກຄົນຄື

ກັນໝົດ" ທີ່ເຮັດໃຫ້ເຂົາເຈົ້າມີຄວາມເຊື່ອໃນພຣະຄຣິດ. ເຊັ່ນອັນເດອາ, ລາວຕ້ອງການໄດ້ຍິນຄຳພະຍານທີ່ວ່າ....." ເບິ່ງແມ ພຣະເມສານ້ອຍຂອງພຣະເຈົ້າ" (ຂໍ້ 36 ).

ອີກປະການນຶ່ງ ໃນກໍຣະນີຂອງຟີລິບ, ລາວຕ້ອງການເຂົ້າໃກ້ຊິດໂດຍຕົງທີ່ວ່າ " ຈົ່ງຕາມເຮົາມາ." ພຣະເຢຊູຊົງເລືອກເອົາວິທີການເຂົ້າເຖິງທີ່ແຕກຕ່າງກັນໃນແຕ່ລະຄົນ, ແລະພວກເຮົາກໍຄວນເຮັດດັ່ງນັ້ນ. ຟີລິບໄດ້ຮັບການຮຽກເອີ້ນຈາກພຣະເຢຊູໃຫ້ຕິດຕາມພຣະອົງ, ແລະໂດຍວິທີທັມມະດາຟີລິບໄດ້ປະກາດຕໍ່ໄປຫານະທານາເອັນ ໂດຍບອກຂ່າວດີເຊັ່ນດຽວກັນ. ຂ່າວສານຂອງຟີລິບໄດ້ບັລະຍາຍແຕກຕ່າງອອກໄປອີກ: "ເຮົາໄດ້ພົບຜູ້ທີ່ໂມເຊໄດ້ກ່າວເຖິງໃນໜັງສືພຣະບັນຍັດ (ແລະທີ່ພວກຜູ້ປະກາດພຣະທັມໄດ້ກ່າວເຖິງເໝືອນກັນ): ເຢຊູລູກຂອງໂຢເຊັບ ໄທນາຊາເຣັດ."

ອັນເດອາແລະຟີລິບເປັນແບບຢ່າງສຳລັບພວກເຮົາໃນການຊັກຊວນຄົນອື່ນໃຫ້ມາຫາພຣະເຢຊູ ໂດຍການແບ່ງປັນຂ່າວດີແບບງ່າຍໆ ເຣື່ອງຂອງພຣະເຢຊູກັບຄົນອື່ນ. ທ່ານຕ້ອງການບອກຂ່າວດີເຣື່ອງພຣະເຢຊູໃຫ້ກັບຄົນອື່ນບໍ່? ຄືບອກຂ່າວດີທີ່ທ່ານຮູ້ຈັກແລະໄດ້ຕິດຕາມພຣະອົງ.

## 3. <u>ໂຢຮັນ 1:46-49</u>:

*[46]ນະທານາເອັນຖາມຟີລິບວ່າ, "ສິ່ງດີອັນໃດຈະມາຈາກນາຊາເຣັດໄດ້ຫລື" ຟີລິບຕອບວ່າ, "ມາເບິ່ງເອົາ."[47]ພຣະເຢຊູຊົງເຫັນນະທານາເອັນມາຫາພຣະອົງ ກໍຊົງກ່າວເຖິງເຣື່ອງຂອງທ່ານວ່າ, "ເບິ່ງແມ, ຜູ້ນີ້ຄືຊົນຊາດອິສຣາເອນແທ້ ໃນຕົວທ່ານບໍ່ມີອຸບາຍ." [48]ນະທານາເອັນໄດ້ທູນຖາມພຣະອົງວ່າ, "ທ່ານຮູ້ຈັກຂ້ານ້ອຍໄດ້ຢ່າງໃດ" ພຣະເຢຊູຊົງຕອບວ່າ, "ເຮົາໄດ້ເຫັນທ່ານແລ້ວເມື່ອທ່ານຢູ່ໃຕ້ຕົ້ນເດື່ອເທດກ່ອນທີ່ຟີລິບໄດ້ເອີ້ນທ່ານນັ້ນ." [49]ນະທານາເອັນທູນຕອບພຣະອົງວ່າ, "ພຣະອາຈານເອີຍ, ທ່ານເປັນພຣະບຸດຂອງພຣະເຈົ້າ ທ່ານເປັນກະສັດຂອງຊາດອິສຣາເອນ."*

ຂະນະທີ່ອັນເດອາ, ເປໂຕ, ແລະຟີລິບໄດ້ຕິດຕາພຣະເຢຊູໄປໃນທັນທີທັນໃດ, ນະທານາເອັນແມ່ນຍັງລັງເລໃຈຢູ່. ພວກເຮົາບໍ່ຮູ້ຖ້າທັສນະຄວາມຄິດຂອງນະທານາເອັນສະທ້ອນໃຫ້ເຫັນການຂັດແຍ້ງລະຫວ່າງບ້ານເດີມຂອງນະທານາເອັນຄື ການາ (ຢຮ 21:2) ແລະນາຊາເຣັດ. ຫລືນາຊາເຣັດ ມີຊື່ສຽງ "ໄປໃນທາງທີ່ຜິດ."

ໃນທຸກວັນນີ້ຄົນຈຳນວນຫລວງຫລາຍມັກຕອບໂຕ້ຕໍ່ສູ້ການກ່າວອ້າງຂອງພຣະເຢຊູ. ເມື່ອພວກເຮົາປະເຊີນໜ້າກັບບຸກຄົນເຊັ່ນນັ້ນ, ພວກເຮົາຈະເຮັດດີຕາມແບບຢ່າງຂອງຟີລິບ ເລີ້ມຕົ້ນດ້ວຍສອງຢ່າງທີ່ຟີລິບບໍ່ເຮັດ:

- **ຟີລິບບໍ່ຕໍ່ສູ້ທາງສ່ວນຕົວຕໍ່ການມີໃຈອະຄະຕິຂອງນະທານາເອັນ.** ຄົນຜູ້ທີ່ສົງສັຍພຣະເຢຊູ ບໍ່ແມ່ນເຂົາເຈົ້າຈະສົງສັຍເຮົາສເມີໄປ, ເຂົາເຈົ້າອາດສັດຊື່ຕໍ່ປະສົບການຊີວິດຂອງເຂົາເຈົ້າເອງກໍເປັນໄດ້.
- **ຟີລິບບໍ່ໄດ້ຖົກຖຽງດ້ານສະຕິປັນຍາກັບນະທານາເອັນ.** ແຕ່ ຟີລິບພຽງແຕ່ທົບທວນແບບງ່າຍວ່າພຣະເຢຊູໄດ້ເວົ້າຫຍັງແດ່ໃນຕອນຕົ້ນ: "ຈົ່ງມາແລະເບິ່ງ."

ຟີລິບໃຫ້ຕົວຢ່າງທີ່ສຳຄັນແກ່ເຮົາຄືພຽງແຕ່ເພ່ງເບິ່ງພຣະເຢຊູ. ການເຂົ້າເຖິງນີ້ເອີ້ນວ່າຄວາມອົດທົນຕໍ່ບຸກຄົນທີ່ຍັງມີຄວາມລັງເລໃຈ, ການສົງສັຍ, ຫຼືແມ່ນແຕ່ຄວາມບໍ່ໃສ່ໃຈເມື່ອເຂົາໄດ້ຍິນຂ່າວດີ. ພາບຄວາມຈິງຂອງເຂົາທີ່ມີແຕ່ກ່ອນນັ້ນ ສາມາດປິດບັງການທີ່ຈະເບິ່ງເຫັນຄວາມຊົມຊື່ນຍິນດີໃນຄວາມພົ້ນໃນພຣະຄຣິດ. ພວກເຮົາຈຳເປັນຕ້ອງຊ່ວຍເຫຼືອເຂົາໃຫ້ເບິ່ງເຫັນຈຸດບົກພ່ອງຂອງເຂົາດ້ວຍໃຈອ່ອນສຸພາບເພື່ອເຂົາຈະໄດ້ພົບພຣະເຢຊູ.

ນະທານາເອັນໄດ້ຕອບຮັບຕໍ່ການຊັກຊວນຂອງຟີລິບ, ເຖິງແມ່ນວ່ານະທານາເອັນຍັງເປັນຜູ້ສົງສັຍຢູ່. ພຣະເຢຊູໄດ້ໃຫ້ຄຳຕອບໃນຄວາມສົງສັຍໂດຍບອກນະທານາເອັນວ່າ, "ເຮົາໄດ້ເຫັນທ່ານແລ້ວເມື່ອທ່ານຢູ່ໃຕ້ຕົ້ນເດື່ອເທດກ່ອນທີ່ຟີລິບໄດ້ເອີ້ນທ່ານນັ້ນ." ສຳລັບຜູ້ຊຳນານທາງດ້ານກົດໝາຍຢິວແລະລູກສິດຂອງເຂົາ, ຕົ້ນເດື່ອເທດແມ່ນສະຖານທີ່ທົບທວນຄວາມຄິດແລະຕັ້ງສະມາທິຂອງຜູ້ນຳສາສນາທາງດ້ານພຣະບັນຍັດ ເປັນສະຖານທີ່ຂອງການອຸທິດຖວາຍຕົວ. ນັ້ນເປັນວິທີທີ່ພຣະເຢຊູຊີ້ໃຫ້ເຫັນວ່ານະທານາເອັນເປັນຄົນຢິວແທ້ ໃນຕົວລາວບໍ່ມີກົນອຸບາຍ.

ນີ້ແມ່ນຄວາມເຂົ້າໃຈທີ່ເໜືອທັມມະຊາດທີ່ມາຈາກພຣະເຢຊູ, ແລະໄດ້ເຮັດໃຫ້ນະທານາເອັນເກີດຄວາມສົນໃຈຫລາຍໄປກວ່ານັ້ນ, ຊຶ່ງໄດ້ກຳຈັດຄວາມສົງສັຍຂອງນະທານາເອັນອອກໄປ. ຟີລິບໄດ້ທ້າທາຍໃຫ້ນະທານາເອັນ "ມາແລະເບິ່ງ" ມາພິສູດເບິ່ງພຣະເຢຊູດ້ວຍຕົວລາວເອງ. ນະທານາເອັນໄດ້ໄປເບິ່ງ ແລະລາວກໍມີການປ່ຽນແປງ ລາວໄດ້ກາຍມາເປັນສາວົກຂອງພຣະເຢຊູ.

ຊີໂມນ, ຟີລິບ, ແລະນະທານາເອັນ ຄິດກ່ຽວກັບຫຍັງທີ່ເຮັດໃຫ້ຊີວິດຂອງພວກເຂົາແຕກຕ່າງ (ແລະໃນໂລກ) ເພາະຄຳເຊື້ອເຊີນແບບງ່າຍໆ. ພວກເຮົາສາມາດເຮັດໃຫ້ຊີວິດຂອງຄົນອື່ນມີຄວາມແຕກຕ່າງຫຼາຍປານໃດໃນທຸກວັນນີ້ກັບຄຳເຊື້ອເຊີນອັນດຽວກັນທີ່ວ່າ "ມາແລະເບິ່ງ"?

## ນຳໃຊ້ໃນຊີວິດ

**ທ່ານຈະເຊື້ອເຊີນຄົນອື່ນໆໃຫ້ "ມາແລະເບິ່ງ " ພຣະເຢຊູຢ່າງໃດໃນອາທິດນີ້? ຈົ່ງພິຈາຣະນາເບິ່ງຄຳແນະນຳນີ້.**

- **ອະທິຖານ.** ຖ້າທ່ານບໍ່ເຄີຍເວົ້າກັບຄົນອື່ນກ່ຽວກັບເຣື່ອງພຣະເຢຊູ, ຈົ່ງເລີ້ມຕົ້ນດ້ວຍການອະທິຖານ. ຜູ້ທີ່ບໍ່ຮູ້ພຣະຄຣິດ ຜູ້ທີ່ບໍ່ມີພຣະຄຣິດ ອະທິຖານເພື່ອບຸກຄົນນັ້ນ, ອະທິຖານໃຫ້ມີໂອກາດທີ່ຈະເວົ້າ, ແລະອະທິຖານໃຫ້ມີຄວາມກ້າຫານ.

- **ເຊື້ອເຊີນ.** ເຊີນຄົນອື່ນໆໃຫ້ "ມາແລະເບິ່ງ" ດ້ວຍການເຊື້ອເຊີນເຂົາໃຫ້ເຂົ້າຮ່ວມໃນກຸ່ມສຶກສາພຣະຄັມພີຂອງທ່ານ. ການສຶກສາພຣະຄັມພີເປັນວິທີທາງທີ່ດີສຳລັບແຕ່ລະບຸກຄົນທີ່ຈະເຫັນວ່າພຣະຄຳຂອງພຣະເຈົ້າເວົ້າຫຍັງແດ່ກ່ຽວກັບເຣື່ອງພຣະເຢຊູ.

- **ບອກ.** ບອກເຣື່ອງພຣະເຢຊູໃຫ້ກັບຄົນອື່ນແບບງ່າຍໆເຊັ່ນ ທ່ານໄດ້ພົບກັບພຣະອົງຢ່າງໃດແລະພຣະອົງໄດ້ເຮັດອັນໃດແດ່ກັບຊີວິດຂອງທ່ານ. ບອກກັບຄົນອື່ນເຖິງປະສົບການທີ່ທ່ານໄດ້ພົບກັບພຣະເຢຊູແລະພຣະອົງໄດ້ປ່ຽນແປງການດຳເນີນຊີວິດຂອງທ່ານຢ່າງໃດ.

ມີບາງຄົນໄດ້ແນະນຳທ່ານໃຫ້ມາຮູ້ຈັກກັບພຣະເຢຊູ. ມີບາງຄົນໃຊ້ເວລາແບ່ງປັນຂ່າວດີກັບທ່ານແລະຊ່ວຍເຫຼືອທ່ານໃຫ້ " ມາແລະເບິ່ງ" ເພື່ອຈະຮູ້ວ່າພຣະເຢຊູຄືທຸກສິ່ງ. ບັດນີ້ເປັນເວລາຂອງທ່ານແລ້ວ ທີ່ຈະເຮັດຢ່າງດຽວກັນ.

**ອຸປຖັມໂດຍລາວຊາວເທີນບັບຕິດສັມພັນwww.lsbf.org ແປໂດຍ VR.**